# ຂໍ້ດີ ແລະ ຂໍ້ເສຍ

**ຂໍ້ດີ**

- ເຮັດໄດ້ທຸກລະດູການ
- ລຳຕົ້ນທີ່ແຂງຈະອ່ອນນຸ້ມລົງສັດມັກກິນ
- ຫຍ້າໝັກຈະຮັກສາຄຸນນະພາບເຖິງ 85%

**ຂໍ້ເສຍ**

- ຂາດວິຕາມິນ ດີ D
- ເກີດເຊື້ອຣາ-ເສຍຫາຍງ່າຍ
- ຕ້ອງມີຄວາມຮູ້ ຄວາມຊຳນານ




+85620 5599 6544

WhatsApp +85620 5599 6544

:khantn_lsv@hotmail.com

**ກວດແກ້ໂດຍ: ທ່ານ ສົມໄຊ ສີຊານົນ**
**ຫົວໜ້າກົມສົ່ງເສີມກະສິກຳ ແລະ ສະຫະກອນ**
**ຂັນທະນູ 020 5599 6544**
**ອີເມວ** :khantn_lsv@hotmail.com
**ເບີໂທ: + 85621732072**



**ສະໜັບສະໜູນໂດຍ:**

EU The TAP-AIS project




# ການເຮັດຫຍ້າໝັກ

# (Silage)



# ການເຮັດຫຍ້າໝັກ



**ການເຮັດຫຍ້າໝັກ:** ແມ່ນການເອົາຫຍ້າສົດມາເກັບຮັກສາໄວ້ໃນສະພາບບໍ່ມີອາກາດ ເພື່ອໃຫ້ເກີດຈາກຂະບວນການໝັກກ້ວຍຈຸລິນຊີ ໃນທຳມະຊາດ ໂດຍເຮັດໃຫ້ຄຸນຄ່າທາງອາຫານສັດປ່ຽນແປງໜ້ອຍທີ່ສຸດ; ເກັບໄວ້ເປັນອາຫານສັດໃນຊ່ວງລະດູຂາດຫຍ້າສົດ.

## ປັດໃຈໃນການເຮັດຫຍ້າໝັກ

- ຊະນິດຂອງຫຍ້າທີ່ຈະນຳມາເຮັດໝັກເຊັ່ນ: ຫຍ້າເນເປຍ,ຫຍ້າຫວານ,ຫຍ້າຣູຊິ,ສາລີ ແລະ ເຂົ້າຟ່າງ
- ອາຍຸຂອງຫຍ້າທີ່ຄວນຕັດ ບໍ່ອ່ອນ, ບໍ່ແກ່ຫຼາຍເກີນໄປ
- ຂະໜາດຂອງຫຍ້າທີ່ເໝາະສົມປະມານ 2-3 cm
- ລະດັບຄວາມຊຸ່ມເໝາະສົມໃນລະດັບ 65-75 % *(ບໍ່ໃຫ້ຫຍ້າປຽກ ຫຼື ຊຸ່ມຫຼາຍເກີນໄປ)*
- ເຮັດໃຫ້ອາກາດອອກຈາກຖັງໝັກ

## ຂັ້ນຕອນການເຮັດຫຍ້າໝັກ

- ຄວນຕັດຫຍ້າຕອນທີ່ມີແສງແດດ
- ຕັດມາຜຶ່ງໄວ້ໃນຮົ່ມປະມານ 2-3 ຊົ່ວໂມງ ເພື່ອໃຫ້ຄວາມຊຸ່ມຫຼຸດລົງ
- ຕັດຫຼືສັບໃຫ້ມີຂະໜາດນ້ອຍລົງປະມານ 2-3cm
- ບັນຈຸໃສ່ຖັງ ຫຼື ຖົງຢາງໃຫ້ແໜ້ນ
- ໄລ່ອາກາດອອກ ເຮັດໃຫ້ບໍ່ມີອາກາດ
- ປິດຖັງ ຫຼື ຖົງຢາງໃຫ້ແໜ້ນ



**ໝັກໄວ້ໃນຮົ່ມ 21 ວັນ ສາມາດນຳໃຊ້ໄດ້**



## ຄຸນລັກສະນະຂອງຫຍ້າໝັກທີ່ດີ

* ມີສີຂຽວແກມເຫຼືອງ
* ກິ່ນຫອມສົ້ມອ່ອນໆຄືກັບກິ່ນຫມາກໄມ້ດອງ
* ເນື້ອຫຍ້າໝັກບໍ່ເມືອກ, ບໍ່ເລະ, ບໍ່ມີເຊື້ອຣາ
* ຄວາມຊຸ່ມໃນລະຫວ່າງ 65-70%